ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****************************

ອົງການໄອຍະການປະຊາຊົນສູງສຸດ — ເລກທີ 158/ ອອປສ

ນະຄອນຫຼວງວຽງຈັນ, ວັນທີ 24 / 2/2011

# ຂໍ້ຕົກລົງ

## ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ວ່າດ້ວຍການມອບບັນດາໂຄງການ ສົກປີ 2010 - 2011 ໃຫ້ຫ້ອງການ, ບັນດາກົມ, ອົງການໄອຍະການປະຊາຊົນສູງສຸດ

======================

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງໃໝ່ ປີ 2009;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ວ່າດ້ວຍການເລືອກຕັ້ງໄອຍະການປະຊາຊົນສູງສຸດ ສະບັບເລກທີ 09/ສພຊ, ລົງວັນທີ 9 ມິຖຸນາ 2006;
- ອີງຕາມ ແຜນພັດທະນາວຽກງານໄອຍະການປະຊາຊົນ ສົກປີ 2010 - 2011;

## ຫົວໜ້າອົງການໄອຍະການປະຊາຊົນສູງສຸດຕົກລົງ:

ມາດຕາ 1: ມອບບັນດາໂຄງການທີ່ໄດ້ຕົກລົງຮັບຮອງເອົາໃນກອງປະຊຸມວຽກງານໄອຍະການປະຊາຊົນທົ່ວປະເທດ ສົກປີ 2010 - 2011 ໃຫ້ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ.

**I. <u>ແຜນງານປັບປຸງລະບົບການຈັດຕັ້ງ ແລະ ພັດທະນາບຸກຄະລາກອນ ລວມມີ 7 ໂຄງການ</u>**

1. <u>ມອບໃຫ້ ກົມຈັດຕັ້ງ - ພະນັກງານ</u>
   - 1.1. ໂຄງການບູລະນະກົງຈັກການຈັດຕັ້ງອົງການໄອຍະການປະຊາຊົນເຂດ ແລະ ພະນັກງານໄອຍະການປະຊາຊົນເຂດປະຈຳເມືອງ;
   - 1.2. ໂຄງການຈັດຊັ້ນ, ຂັ້ນໃຫ້ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ;
   - 1.3. ໂຄງການຂຶ້ນແຜນສ້າງພະນັກງານຄຸ້ມຄອງນຳພາຂັ້ນຕ່າງໆ;
   - 1.4. ໂຄງການຈັດສົ່ງພະນັກງານໄປບຳລຸງຍົກລະດັບໄລຍະສັ້ນຢູ່ ສສ ຫວຽດນາມ ແລະ ສປ ຈີນ;

4.2. ໂຄງການປະສານສົມທົບກ່ຽວກັບການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

4.3. ການສະເໜີຮ່າງກົດໝາຍວ່າດ້ວຍການອະໄພຍະໂທດ;

4.4. ກົດໝາຍວ່າດ້ວຍອົງການໄອຍະການທະຫານ.

5. <u>ມອບໃຫ້ ຫ້ອງການ ອອປສ ມີໂຄງການດັ່ງນີ້</u> :

5.1. ໂຄງການຜັນຂະຫຍາຍກົນໄກຄຸ້ມຄອງເອກະສານ ການແກ້ໄຂຄະດີແບບຄົບວົງຈອນ;

**III.** <u>ແຜນການກໍ່ສ້າງພື້ນຖານໂຄງລ່າງ ແລະ ປະກອບພາຫະນະ, ວັດຖຸອຸປະກອນຮັບໃຊ້ລວມມີ 4 ໂຄງການ</u>

1. ໂຄງການກໍ່ສ້າງທີ່ຕົກລົງໄປແລ້ວ:

- ອົງການໄອຍະການປະຊາຊົນແຂວງວຽງຈັນ
- ອົງການໄອຍະການປະຊາຊົນເຂດ 1 ນະຄອນຫຼວງວຽງຈັນ;
- ອົງການໄອຍະການປະຊາຊົນເຂດ 1 ແຂວງໄຊຍະບູລີ;
- ອົງການໄອຍະການປະຊາຊົນເຂດ 2 ແຂວງບໍ່ແກ້ວ;
- ອົງການໄອຍະການປະຊາຊົນເຂດ 1 ແຂວງອຸດົມໄຊ;
- ກໍ່ສ້າງ ກຳແພງ ແລະ ປັບປຸງສະຖານທີ່ພັກອົງການໄອຍະການປະຊາຊົນພາກເໜືອ;
- ຕິດຕັ້ງໝໍ້ແບ່ງໄຟຟ້າຢູ່ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ;

2. ໂຄງການສົມທົບການກໍ່ສ້າງຫ້ອງການ ທີ່ແຂວງຊ່ວຍເຫລືອ ມອບໃຫກົມແຜນການ;

3. ໂຄງການສ້າງລະບົບຖານຂໍ້ມູນ DATABASE ວຽກງານໄອຍະການ ມອບໃຫ້ຄະນະຮັບຜິດຊອບໂຄງການ ຂອງ ອອປສ;

4. ມອບໃຫ້ຫ້ອງການ ອອປສ ມີໂຄງການຈັດຊື້ ແລະ ແບ່ງປັນພາຫະນະ, ອຸປະກອນຮັບໃຊ້;

**IV.** <u>ແຜນງານຮ່ວມມືກັບຕ່າງປະເທດລວມມີ 5 ໂຄງການ</u>

1. <u>ມອບໃຫ້ ພະແນກສົນທິສັນຍາ ແລະ ຮ່ວມມືກັບຕ່າງປະເທດ ຫ້ອງການ ອອປສ ມີໂຄງການດັ່ງນີ້</u> :

1.1. ໂຄງການຮ່ວມມືກັບສະຖາບັນໄອຍະການປະຊາຊົນສູງສຸດ ແຫ່ງ ສສ ຫວຽດນາມ;

- ກອງປະຊຸມໄອຍະການບັນດາແຂວງທີ່ມີຊາຍແດນຮ່ວມລະຫວ່າງ ລາວ - ຫວຽດນາມ;
- ຕ້ອນຮັບພະນັກງານອາວຸໂສ ສະຖາບັນໄອຍະການປະຊາຊົນສູງສຸດ ແຫ່ງ ສສ ຫວຽດນາມ;

1.2 ໂຄງການຮ່ວມມືກັບອົງການໄອຍະການປະຊາຊົນ ສປ ຈີນ ກ່ຽວກັບການຈັດຕັ້ງຜັນຂະຫຍາຍບົດບັນທຶກການພົບປະຄະນະຜູ້ແທນຂັ້ນສູງຂອງສອງຝ່າຍທີ່ລົງນາມກັນຢູ່ນະຄອນຫລວງວຽງຈັນ;

1.3 ໂຄງການຈັດກອງປະຊຸມຮ່ວມລະຫວ່າງ ອົງການໄອຍະການປະຊາຊົນແຂວງ ທີ່ມີຊາຍແດນຮ່ວມ ລາວ - ໄທ;

1.4. ໂຄງການສືບຕໍ່ຮ່ວມມືກັບອົງການຈັດຕັ້ງສາກົນ ທີ່ໄດ້ຕົກລົງແລ້ວຄື: ອົງການ UNDP, UNICEF, JICA, UNODC ແລະ KOICA;

1.5. ໂຄງການຄົ້ນຄ້ວາ ເພື່ອພົວພັນຮ່ວມມືກັບອົງການໄອຍະການກຳປູເຈຍ, ມຽນມາ ແລະ ປະເທດອື່ນໆທີ່ເໝາະສົມ.

2. <u>ມອບໃຫ້ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ</u>

2.1. ໂຄງການຄົ້ນຄວ້າສ້າງຫລັກສູດຕຳລາການຮຽນ, ການສອນວຽກງານໄອຍະການ;

2.2. ໂຄງການພັດທະນາສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ;

2.3. ໂຄງການຝຶກອົບຮົມໄລຍະສັ້ນຢູ່ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ

- ຝຶກອົບຮົມທິດສະດີການເມືອງ - ການປົກຄອງ ແລະ ຄຸ້ມຄອງນຳພາ ໃຫ້ຫົວໜ້າ, ຮອງຫົວໜ້າ ອົງການໄອຍະການຂັ້ນຕ່າງໆ;

- ຝຶກອົບຮົມພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ທີ່ບໍ່ທັນໄດ້ຮັບການບຳລຸງ ວຽກງານໄອຍະການ;

- ຝຶກອົບຮົມລັດຖະກອນເຂົ້າໃໝ່;

- ຝຶກອົບຮົມພະນັກງານແຜນການ - ການເງິນ;

- ຝຶກອົບຮົມພະນັກງານຄອມພິວເຕີ້;

- ຝຶກອົບຮົມພະນັກງານຄຸ້ມຄອງບໍລິຫານ;

**II.** <u>ແຜນງານຍົກສູງຄຸນນະພາບການຕິດຕາມກວດກາການປະຕິບັດກົດໝາຍ ແລະ ການຖະແຫລງຕໍ່ສານລວມມີ 10 ໂຄງການ</u>

1. <u>ມອບໃຫ້ ກົມກວດກາທົ່ວໄປ</u>

1.1. ໂຄງການຕິດຕາມກວດກາຄຳຮ້ອງຟ້ອງ, ຮ້ອງທຸກຕໍ່ບຸກຄົນ ຫລື ການຈັດຕັ້ງທີ່ລະເມີດກົດໝາຍ;

1.2. ໂຄງການເກັບກຳສະຖິຕິອາຊະຍາກຳ ແລະ ວິເຄາະອາຊະຍາກຳ;

2. <u>ມອບໃຫ້ ກົມກວດກາຄະດີອາຍາ</u>

2.1. ໂຄງການປະສານສົມທົບກັບເຈົ້າໜ້າທີ່ອົງການສືບສວນ - ສອບສວນກ່ຽວກັບການຕິດຕາມກວດກາການປະຕິບັດກົດໝາຍໃນການສືບສວນ - ສອບສວນຕໍ່ຜູ້ກະທຳຜິດ;

2.2. ໂຄງການປະສານສົມທົບກັບສານປະຊາຊົນ ກ່ຽວກັບການເຂົ້າຮ່ວມຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານແຕ່ລະຂັ້ນ;

2.3. ໂຄງການປະສານສົມທົບກັບສານປະຊາຊົນ ກ່ຽວກັບການຄົ້ນຄວ້າ ແລະ ຂຽນຄຳຖະແຫລງຕໍ່ສານຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ຄະດີອາຍາ;

3. <u>ມອບໃຫ້ ກົມກວດກາຄ້າຍຄຸມຂັງ - ດັດສ້າງ</u>

3.1. ໂຄງການປະສານສົມທົບກັບເຈົ້າໜ້າທີ່ ໃນການຕິດຕາມກວດກາການປະຕິບັດກົດໝາຍຢູ່ຄ້າຍຄຸມຂັງ - ດັດສ້າງ ແລະ ການສຶກສາອົບຮົມດັດສ້າງນັກໂທດ, ຜູ້ຕ້ອງຫາ;

3.2. ໂຄງການປະສານສົມທົບ ກັບອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຕິດຕາມກວດກາການປະຕິບັດຄຳຕັດສິນ ຫລື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

4. <u>ມອບໃຫ້ ຄະນະຮັບຜິດຊອບປັບປຸງ ແລະ ຮ່າງກົດໝາຍ ອອປສ ມີໂຄງການດັ່ງນີ້ :</u>

4.1. ໂຄງການຄົ້ນຄວ້າ ແລະ ສ້າງຮ່າງກົດໝາຍວ່າດ້ວຍພະນັກງານໄອຍະການ ແລະ ຜູ້ຊ່ວຍໄອຍະການ;

2. <u>ມອບໃຫ້ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ</u>

- ຮັບຊ່ວງຊານໂຮງຮຽນບຳລຸງສ້າງວຽກງານໄອຍະການປະຊາຊົນແຫ່ງ ສສ ຫວຽດນາມ ມາຊ່ວຍສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ກ່ຽວກັບການສ້າງຫລັກສູດ, ການຮຽນ, ການສອນວຽກງານໄອຍະການ;

ມາດຕາ 2: ຫ້ອງການ, ບັນດາຫົວໜ້າກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ຮີບຮ້ອນຄົ້ນຄວ້າ ແລະ ສ້າງໂຄງການທີ່ໄດ້ຮັບມອບໝາຍໃຫ້ສຳເລັດໃນເດືອນ 03 ປີ 2011 ຜ່ານຄະນະນຳໃນຕົ້ນເດືອນ 04.

ມາດຕາ 3: ກົມແຜນການ-ການເງິນເປັນໜ່ວຍງານຊ່ວຍຄະນະນຳໃນການຕິດຕາມກວດກາ ໃນການສ້າງໂຄງການ ( ທຸກໂຄງການ ) ແລະ ໃນການຈັດຕັ້ງປະຕິບັດໂຄງການກໍ່ສ້າງພື້ນຖານໂຄງລ່າງ ໃນທົ່ວປະເທດ.

ຫ້ອງການເປັນໜ່ວຍງານຊ່ວຍຄະນະນຳ ໃນການຈັດຕັ້ງປະຕິບັດໂຄງການ ທີ່ບໍ່ແມ່ນການກໍ່ສ້າງພື້ນຖານໂຄງລ່າງ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**